# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 10 ມິຖຸນາ 2007 (6-10-2007)

## <u>ຝຶກແອບການເຊື່ອຟັງຢ່າງພາກພຽນ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ພຣະບັນຍັດທີສອງ 4:1-2, 6-9, 15-20, 39-40

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າຕ້ອງປະສົງຢາກໃຫ້ໄພ່ພົນຂອງພຣະອົງເຊື່ອຟັງແລະພຣະອົງກໍຈະອວຍພຣະພອນແກ່ຜູ້ທີ່ເຮັດຢ່າງພາກພຽນນັ້ນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ຮັກການອຸທິດຕົນຕໍ່ພຣະເຈົ້າໂດຍ:

- ການສຳຣວດເບິ່ງຜົນຂອງການຕິດຕາມຄຳສັ່ງຂອງພຣະເຈົ້າແທນທີ່ຈະແມ່ນການປ່ຽນແປງມາດຕະຖານຂອງພຣະອົງ.
- ການຕັດສິນໃຈສແວງຫາແລະເຊື່ອຟັງແຜນການຂອງພຣະເຈົ້າໃນທຸກໆກໍຣະນີທີ່ທ່ານກຳລັງປະເຊີນຢູ່.

## <u>ຂ້າພະເຈົ້າຈະເຊື່ອຟັງພຣະເຈົ້າຢ່າງພາກພຽນໄດ້ແນວໃດ?</u>

ໃນລາຍການສົນທະນາກັນໃນໂທຣະທັດນີ້ນັ້ນມັນໄດ້ມີຄວາມສົນໃຈ. ຜູ້ເປັນແມ່ກຳລັງຮ້ອງໄຫ້ປານໜ່ວຍຕາຈະຫຼຸດອອກມາໃນການເປັນຫ່ວງລູກສາວວັຍລຸ້ນທີ່ກຳລັງຕິດການດື່ມເຫລົ້າ. ແຕ່ວ່າເມື່ອໂຄສົກດັ່ງຄົນນັ້ນໄດ້ສໍ້ຖາມເຖິງບັນຫາການດື່ມຂອງຜູ້ເປັນແມ່ແລ້ວເຫັນວ່າມັນເປັນຄົນລະເຣື່ອງເລີຍ! ແມ່ຄົນນີ້ບໍ່ເຂົ້າໃຈຫລັກການອັນຜິດທີ່ໄດ້ຕັ້ງກົດຣະບຽບໃຫ້ລູກສາວຂອງລາວເຮັດຕາມແຕ່ຕົວລາວເອງກໍຕັ້ງກົດອີກຢ່າງນຶ່ງ. ແມ່ຄົນນີ້ກໍຕົກຢູ່ໃນຣະບົບທັມມະດາຂອງຝ່າຍໂລກນີ້.

ມີຫລາຍຄົນກໍເຫັນດີເຫັນພ້ອມວ່າການມີກົດເກນນັ້ນມັນດີ-ຖ້າຫາກວ່າກົດເກນນັ້ນເປັນຂອງສ່ວນຕົວ. ກົດເກນສ່ວນຕົວແມ່ນມັນປ່ຽນແປງໄດ້, ລະເລີຍໄດ້, ບິດເບືອນໄດ້ແລະຫັນປ່ຽນຕາມສະຖານະການຕ່າງໆໄດ້ເພື່ອໃຫ້ເໝາະສົມກັບຄວາມປາຖນາໃນປະເພນີທີ່ນິຍົມຊົມຊອບນັ້ນ. ການປະຕິບັດຕາມຄວາມຄິດທີ່ຜິດຢ່າງນີ້ແມ່ນການເມີນເສີຍຕໍ່ຄຳສັ່ງອັນແຈ່ມແຈ້ງຂອງພຣະເຈົ້າທີ່ພົບຢູ່ໃນພຣະຄັມພີແລະເບິ່ງຫລັກການຂອງພຣະເຈົ້າແບບຜິດໆວ່າບໍ່ເໝາະສົມກັບສະພາບການ. ໃນສັງຄົມປະຈຸບັນນີ້ການໄຫວ້ພຣະທຽມແມ່ນຂອງທັມມະດາຫລືໂພດໄປກວ່ານັ້ນກໍວ່າບໍ່ຜິດຫຍັງເລີຍ ຊຶ່ງພຣະຄັມພີບົ່ງບອກຢ່າງຊັດແຈ້ງວ່າມັນເປັນການຜິດບາບ.

ຄຣິສຕຽນຈະໂຕ້ຕອບຢ່າງໃດ? ໃນພຣະທັມພຣະບັນຍັດທີສອງຊ່ວຍພວກເຮົາໃຫ້ເຫັນວິທີທີ່ພຣະເຈົ້າປະສົງໃຫ້ພວກເຮົາໂຕ້ຕອບ.

## <u>ສຶກສາພຣະຄັມພີ</u>

### 1. <u>ໃຫ້ພຣະຄຳຂອງພຣະເຈົ້າເປັນມາດຕະຖານຂອງທ່ານ</u> (ພຣະບັນຍັດສອງ 4:1-2)

ໃນພຣະທັມພຣະບັນຍັດທີສອງບົດທີ່ 4 ກ່າວເຖິງເຣື່ອງທີ່ໂມເຊກ່າວບອກພວກ**ອິສຣາເອນ**. ກ່ອນໜ້ານີ້, ລາວກໍໄດ້

ຕັກເຕືອນພວກເຂົາໃຫ້ລະນຶກເຖິງເຣື່ອງລາວທີ່ເກີດຂຶ້ນໃນສມັຍລຸ້ນພວກພໍ່ຂອງເຂົາຕໍ່ການປະທານພຣະບັນຍັດໃຫ້ແກ່ພວກເຂົາທີ່ໂຮເຣັບ. ດຽວນີ້, ແມ່ນຕອນທີ່ພວກອິສຣາເອນຕຽມພ້ອມທີ່ຈະເຂົ້າໄປໃນ**ແຜ່ນດິນ**ແຫ່ງພຣະສັນຍາ, ໂມເຊໄດ້ຊັກຊວນພວກຄົນລຸ້ນໃຫມ່ໃຫ້ເຊື່ອຟັງ**ພຣະບັນຍັດ**ຂອງພຣະເຈົ້າ**ທັງຫມົດ**ແລະຫ້າມບໍ່ໃຫ້ເພີ້ມເຕີມເຂົ້າຫລືຕັດອອກ.

ໂມເຊໄດ້ກ່າວວ່າ, "**ຈົ່ງຟັງ**," ເພິ່ນໄດ້ຕັກເຕືອນພວກອິສຣາເອນວ່າພວກເຂົາຕ້ອງປະຕິບັດຕາມພຣະຄໍາຂອງພຣະເຈົ້າທັງຫມົດ. ບໍ່ພຽງແຕ່ພຣະບັນຍັດສິບປະການເທົ່ານັ້ນໂມເຊເຕືອນພວກເຂົາໃນ(ພຣະບັນຍັດສອງ 5:6-21;ສົມທຽບກັບ ອົບພະຍົບ ໒0:1-17). ໂມເຊຍັງຢາກໃຫ້ພວກເຂົາຈື່ຈໍາ**ພຣະບັນຍັດຂອງພຣະເຈົ້າທັງຫມົດ**ເຫລົ່ານີ້ເຊັ່ນກັນ. ການເປັນໄພ່ພົນຂອງພຣະເຈົ້າ, ພວກເຂົາຕ້ອງຈົດຈໍາແລະເຊື່ອຟັງພຣະບັນຍັດຂອງພຣະເຈົ້າສເມີ. ໂມເຊໄດ້ເຕືອນພວກເຂົາໃຫ້ປະຕິບັດຕາມເພື່ອຈະເປັນພຣະພອນມາສູ່ພວກເຂົາ, ການທີ່ຍິນຍອມເຂົ້າມີສ່ວນກັບສັງຄົມຊາວໂລກບໍ່ດີນກໍຈະພົບກັບຄວາມປວດຫົວແລະຄວາມຕາຍ.

ດັ່ງທີ່ໂມເຊໄດ້ຕັກເຕືອນຊາວອິສຣາເອນວ່າພຣະບັນຍັດຂອງພຣະເຈົ້າທີ່ຊົງປະທານໃຫ້ນັ້ນແມ່ນເພື່ອພວກເຂົາ**ຈະມີຊີວິດຢູ່**, **ເຂົ້າໄປຍຶດຄອງເອົາແຜ່ນດິນມາເປັນກັມສິດ**, ພວກເຮົາກໍຄວນຈົດຈໍາໄວ້ສເມີວ່າພຣະຄໍາທີ່ໄດ້ປາກົດໃຫ້ພວກເຮົາໄດ້ເຫັນຢູ່ນີ້ແມ່ນເພື່ອຈະນໍາຜົນດີມາສູ່ພວກເຮົາ. ການຊົງປະທານໃຫ້ຂອງພຣະເຈົ້າເປັນການອະນຸຍາດໃຫ້ພວກເຮົາ**ມີຊີວິດຢູ່**(ໂດຍການສາລະພາບຄວາມຜິດບາບຂອງພວກເຮົາແລະເຊື່ອໃນພຣະຄຣິດ), **ເຂົ້າໄປ** (ເລີ້ມເຂົ້າໃຈຕໍ່ເປົ້າຫມາຍອັນແທ້ຈິງຂອງພຣະເຈົ້າສໍາລັບຊີວິດຂອງພວກເຮົາ), ແລະເຂົ້າໄປຍຶດຄອງເອົາແຜ່ນດິນມາເປັນກັມສິດ (ດໍາຣົງຊີວິດເຮັດການດີທຸກໆວັນທີ່ພຣະເຈົ້າຈັດຕຽມໄວ້ລ່ວງຫນ້າ ເພື່ອໃຫ້ພວກເຮົາໄດ້ເຮັດຕາມ ເອເຟໂຊ ໒:10). ສັງເກດຄວາມຄືບຫນ້ານັ້ນ, ພວກເຮົາບໍ່ໄດ້ລອດພົ້ນໂດຍການເຊື່ອຟັງພຣະບັນຍັດຂໍ້ໃດຂໍ້ນຶ່ງ. ເຫມືອນດັ່ງພວກອິສຣາເອນໄດ້ຖືກປະທານພຣະບັນຍັດໃຫ້ຫລັງຈາກຖືກຊ່ວຍໃຫ້ອອກຈາກເອຢິບໂດຍພຣະຄຸນຂອງພຣະເຈົ້າ, ພວກເຮົາກໍເລີ້ມເຮັດການດີທີ່ພຣະເຈົ້າມອບໝາຍໃຫ້ພວກເຮົາເຮັດ ຫລັງຈາກໄດ້ຮັບຄວາມລອດພົ້ນຍ້ອນພຣະຄຸນທາງຄວາມເຊື່ອ. ແທນທີ່ມັນຈະກົງກັນຂ້າມ, ການດີ(ການຟັງຄວາມ)ແມ່ນຜົນຂອງຄວາມລອດພົ້ນ.

ຄຣິສຕຽນປະເຊີນການທົດລອງແລະຄວາມກົດດັນອັນຫນັກ-ຕໍ່ການຮວມຕົວເຂົ້າກັບສັງຄົມຫລືການແປພຣະທັມຂອງພຣະເຈົ້າໃຫ້ເຫມາະສົມກັບສະພາບການ. ພຣະເຈົ້າຫ້າມບໍ່ໃຫ້ພວກເຮົາ**ເພີ້ມເຕີມຫລືຕັດສິ່ງນຶ່ງສິ່ງໃດອອກ**ຈາກພຣະຄໍາຂອງພຣະອົງ. (ເບິ່ງ ພຣະນິມິດ ໒໒:18-19.) ໂດຍການຍອມຮັບເອົາແລະການຟັງຄວາມຕໍ່ພຣະຄໍາຂອງພຣະເຈົ້າຊຶ່ງເປັນມາດຕະຖານທີ່ບໍ່ປ່ຽນແປງ, ການເອົາໄປໃຊ້ໃນການຕັດສິນເຫດການອັນໃຫມ່ແລະສິ່ງທີ່ຄົ້ນພົບໃຫມ່ໆ (ແທນທີ່ຈະກັບກົງກັນຂ້າມ), ພວກຄຣິສຕຽນຈະຊົມຊື່ນຍິນດີຢ່າງຫມັ້ນໃຈໃນຊີວິດທີ່ພຣະເຈົ້າຄາດຫມາຍເອົາໄວ້ນັ້ນ.

## ໒. ປົກປ້ອງຄໍາພຍານຂອງທ່ານຢ່າງລະມັດລະວັງ (ພຣະບັນຍັດສອງ 4:6-9)

ໂມເຊຍັງຈື່ຈໍາໄດ້ເຖິງແຜນການຂອງພຣະເຈົ້າຊຶ່ງເກີນໄປກວ່າການເລືອກເອົາປະເທດອິສຣາເອນໃຫ້ໄດ້ຮັບພຣະພອນ. ພວກເຂົາຈະເປັນພຍານແກ່ຄົນທັງຫລາຍທີ່ຢູ່ອ້ອມຮອບພວກເຂົານັ້ນ. ໂມເຊໄດ້ຫນູນໃຈຊາວອິສຣາເອນໃຫ້ປະຕິບັດຕາມພຣະບັນຍັດຂອງພຣະເຈົ້າຢ່າງລະມັດລະວັງ(ແລະສອນທາງຂອງພຣະອົງແກ່ຄົນລຸ້ນໃຫມ່) ເພື່ອພວກອິສຣາເອນຈະເຊື່ອຟັງແລະສະແດງອອກໃຫ້ເຫັນຄວາມສັດຊື່ທ່ຽງທັມ, ຄວາມຮັກ, ແລະຣິດທານຸພາບຂອງອົງພຣະຜູ້ເປັນເຈົ້າຕໍ່ຄົນອື່ນໆ.

**ສະຕິປັນຍາ**ແມ່ນລື່ນກວ່າຄວາມຮູ້ທໍາມະດາ; ມັນແມ່ນຄວາມສາມາດໃນການໃຊ້ຄວາມຮູ້ໃນທາງເຫມາະສົມ. **ການເຂົ້າໃຈ**ແມ່ນລື່ນກວ່າການຮູ້ແບບເຜີນໆ; ມັນແມ່ນຄວາມສາມາດໃນການການມອງເຫັນແລະເຂົ້າສ່ວນໃນແຜນການຂອງພຣະເຈົ້າ. ໂມເຊໄດ້ຕັກເຕືອນພວກອິສຣາເອນວ່າການເຊື່ອຟັງພຣະບັນຍັດທັງຫມົດຂອງພຣະເຈົ້າຈະສະແດງໃຫ້ເຫັນ**ສະຕິປັນຍາ**ແລະ**ການເຂົ້າໃຈ**ອັນແທ້ຈິງ. ພວກອິສຣາເອນຈະເລືອກເອົາທາງທີ່ຖືກຕ້ອງ, ບໍ່ແມ່ນຕິດຕາມທາງທີ່ສະດວກແລະມີຊື່ສຽງ. ຄວາມເຊື່ອຟັງຂອງພວກເຂົາຈະສະແດງໃຫ້ເຫັນວ່າພວກເຂົາໄດ້ເຂົ້າໃຈໃນພາກສ່ວນຂອງພວກເຂົາໃນແຜນການໃຫຍ່ຂອງພຣະເຈົ້າ-ເພື່ອຄົນທັງປວງໃນໂລກຈະໄດ້ຮັບພຣະພອນຜ່ານທາງພວກເຂົາ, ໃນຄໍາສັນຍາທີ່ໃຫ້ໄວ້ກັບອັບຣາຮາມ(ປະຖົມມະການ 1໒:3).

ໂມເຊໄດ້ຕັກເຕືອນພວກອິສຣາເອນວ່າການເຊື່ອຟັງນັ້ນແມ່ນການສືບຕໍ່ເຝົ້າລະວັງຢູ່. ການທົດລອງໜ້ອຍນຶ່ງກໍທຳລາຍນິສັຍດີທີ່ໄດ້ສ້າງຂຶ້ນມາແລະການເຊື່ອຟັງທັງໝົດທີ່ເຮັດມາໃນຊີວິດ. ລາວຍັງໄດ້ຕັກເຕືອນພວກອິສຣາເອນເຖິງໜ້າທີ່ຮັບຜິດຊອບຂອງພວກເຂົາທີ່ເກີນກວ່າຊີວິດຂອງພວກເຂົາເອງອີກ ຫລືແມ້ກະທັ້ງໃນລຸ້ນຂອງພວກເຂົາ. ພວກອິສຣາເອນຕ້ອງໄດ້**ສອນ**ພຣະບັນຍັດຂອງພຣະເຈົ້າໃຫ້ແກ່**ລູກຫລານ**ຂອງພວກເຂົາ.

ຄຣິສຕຽນໃນສມັຍນີ້ຈະດຳຣົງຊີວິດທີ່ມີຄວາມເຂົ້າໃຈແລະສລາດໄດ້ແນວໃດ? ໂດຍການດຳຣົງຊີວິດຢ່າງສັດຊື່ຕາມພຣະຄຳຂອງພຣະເຈົ້າ, ພວກເຮົາສາມາດສະແດງໃຫ້ຊາວໂລກໄດ້ເຫັນວ່າພວກເຮົາເຂົ້າໃຈຢ່າງຖືກຕ້ອງແລະຕາມສະຕິປັນຍາອັນແທ້ຈິງ. ພວກເຮົາຕ້ອງໃສ່ໃຈຕໍ່ຄຳເວົ້ານີ້ຢ່າງຈິງຈັງ "ພວກເຮົາເປັນເໝືອນພຣະຄັມພີທີ່ຄົນອື່ນຈະໄດ້ອ່ານ." ທ່ານເປັນຕົວແທນຂອງພຣະເຈົ້າທີ່ມີປະສິດທິພາບຫລາຍ ຢ່າງໜ້ອຍຕໍ່ຄົນຜູ້ນຶ່ງ. ເໝືອນດັ່ງທີ່ພຣະເຈົ້າໄດ້ບອກພວກອິສຣາເອນໃຫ້ສອນຄົນລຸ້ນຕໍ່ໄປກ່ຽວເລື່ອງພຣະເຈົ້າ, ຄຣິສຕຽນທີ່ເປັນພໍ່ແມ່, ປູ່ຍ່າຕາຍາຍມີໜ້າທີ່ໃນການບອກສອນລູກຫລານຂອງຕົນໃຫ້ຮູ້ຈັກແລະຮັກອົງພຣະຜູ້ເປັນເຈົ້າ. ນີ້ແມ່ນເຫດຜົນທີ່ດີທີ່ສຸດອັນນຶ່ງໃນການປົກປ້ອງຄຳພຍານຂອງພວກເຮົາຢ່າງພາກພຽນ ເພາະວ່າສະມາຊິກໃນຄອບຄົວແມ່ນຄອຍເບິ່ງແລະຟັງພວກເຮົາ.

### 3. <u>ຫລີກເວັ້ນຈາກການບູຊາຮູບໂຄຣົບຈົນສຸດຄວາມສາມາດ</u> (ພຣະບັນຍັດສອງ 4:15-20)

ລາຍການໂທຣະທັດທີ່ດັງໃນອະເມຣິກາໃນລະຍະບໍ່ເທິງມານີ້ກໍຄື "ອະເມຣິກັນໄອໂດ" ຊຶ່ງມີທັງການແດກດັນຕໍ່ໜ້າແລະເປີດເຜີຍ, ໃນຂນະທີ່ການບູຊາຮູບໂຄຣົບເປັນທີ່ນິຍົມຊົມຊອບຂອງສັງຄົມປະຈຸບັນ. ທ່ານອາດຄິດວ່າບໍ່ໂພດພີລຶກປານນັ້ນດອກ! ບໍ່ມີຜູ້ໃດໃນສມັຍນີ້ຈະກົ້ມຂາບຮູບໂຄຣົບດອກ. ແຕ່ວ່າຖ້າທ່ານຫາກເຂົ້າໃຈຄວາມໝາຍຂອງຄຳວ່າພຣະທຽມຊຶ່ງເປັນການຍົກຍໍປັ້ນມະນຸດຄົນໃດຄົນນຶ່ງ, ສິ່ງຂອງ, ຫລືຄວາມຄິດ(ລວມທັງເຫດຜົນສ່ວນຕົວ, ຄວາມຮູ້ສຶກ, ຫລືຄວາມເຊື່ອສ່ວນຕົວ) ໃຫ້ຢູ່ເໜືອກວ່າພຣະເຈົ້າທີ່ແທ້ຈິງແລະຊົງພຣະຊົນຢູ່ທີ່ປາກົດໃຫ້ເຫັນໃນພຣະຄຳຂອງພຣະອົງ, ພຣະຄັມພີ, ຫລັງຈາກນັ້ນທ່ານຄຳນຶງເຖິງປໂຍກທີ່ວ່າ, "ການບູຊາຮູບໂຄຣົບເປັນທີ່ນິຍົມຊົມຊອບຂອງສັງຄົມປະຈຸບັນ." ນັ້ນເປັນຄວາມຈິງ.

ໂມເຊໄດ້ເຕືອນພວກອິສຣາເອນເພື່ອຜົນດີສຳລັບເຂົາເອງໃຫ້ລະມັດລະວັງທີ່ສຸດໃນການຫລີກລ້ຽງທາງຕ່າງໆຂອງການບູຊາຮູບໂຄຣົບ. ລາວໄດ້ຮູ້ວ່າດິນແດນການາອານເຕັມໄປດ້ວຍການຂາບໄຫວ້ພຣະບາອານແລະພຣະອື່ນໆອີກ. ການທົດລອງເລື່ອງເພດແມ່ນມີສ່ວນພົວພັນກັບຣະບົບນັບຖືທີ່ຜິດນັ້ນຊຶ່ງມັນເປັນເຫຍື່ອລໍ້ທີ່ມີຣິດຂອງຜີມານຊາຕານ, ທົດລອງຄົນອິສຣາເອນໃຫ້ເຮັດຜິດບາບ. ພວກທີ່ບູຊາພຣະບາອານຍັງອ້າງວ່າຣະບົບການນັບຖືຍັງມີສ່ວນໃນການໄດ້ຮັບຜົນປູກຢ່າງອຸດົມສົມບູນ, ນີ້ກໍນຳໄປສູ່ການທົດລອງດ້ານເສຖກິດອີກດ້ວຍ. ໂມເຊໄດ້ຕັກເຕືອນຊາວອິສຣາເອນເຖິງພຣະເຈົ້າອົງຊົງພຣະຊົນຢູ່, ພວກເຂົາຈະບໍ່ເຫັນພຣະອົງດ້ວຍຕາເປົ່າ. ລາວໄດ້ເຕືອນພວກເຂົາບໍ່ໃຫ້ນັບຖືສິ່ງທີ່ຖືກຊົງສ້າງ-**ຊາຍຫລືຍິງ**, ສັດຕ່າງໆ, ນົກ, **ປາຫລືແມ້ກະທັ້ງດວງຕາເວັນ, ດວງຈັນ…ດາວຕ່າງໆ**ແລະຈັກກະວານ. ບັນຫາພື້ນຖານຂອງພວກທີ່ບູຊາຮູບໂຄຣົບຄືເຂົານັບຖືສິ່ງທີ່ຖືກສ້າງຂຶ້ນແທນທີ່ຈະນັບຖືຜູ້ຊົງສ້າງ(ໂຣມ 1:25)

ພວກເຮົາກໍຫລອກຕົວເອງຖ້າຫາກພວກເຮົາຄິດວ່າອັນຕະລາຍຂອງການບູຊາຮູບໂຄຣົບເກີດຂຶ້ນແຕ່ໃນອະດີດເທົ່ານັ້ນ. ຕົວຢ່າງອັນນຶ່ງທີ່ຄິດໄດ້ແມ່ນພວກທີ່ເອົາເງິນເປັນພຣະເຈົ້າຂອງພວກເຂົາ. ບາງທີການບູຊາຮູບໂຄຣົບທີ່ເຜີຍແຜ່ຢ່າງກວ້າງຂວາງໃນສມັຍນີ້ຄືການສ້າງເຫດຜົນສຳລັບຕົນເອງ, ຄວາມຮູ້ສຶກ, ຫລືຄວາມເຊື່ອສ່ວນຕົວເພື່ອນຳພາຊີວິດຂອງພວກເຂົາເອງ. ອັນທີ່ຈິງ, ມີອີກຊື່ນຶ່ງສຳລັບພວກນີ້ຄື "ຫລັງສມັຍ" ຄືປະສົບການຕ່າງໆຫລືຄວາມເຊື່ອຂອງເຂົາມີນ້ຳໜັກຫລາຍກວ່າອຳນາດອື່ນໆ, ລວມທັງກົດໝາຍຂອງບ້ານເມືອງ, ຄວາມປົກກະຕິ, ຫລືແມ້ກະທັ້ງພຣະຄຳຂອງພຣະເຈົ້າ. ພວກຄຣິສຕຽນຈຳເປັນຕ້ອງຕື່ນຂຶ້ນແລະລະວັງຕໍ່ອັນຕະລາຍຂອງການບູຊາຮູບໂຄຣົບ. ມັນຈະມາໃນຮູບແບບໃດກໍຕາມມັນກໍຈະທຳລາຍຄວາມເຂົ້າໃຈແລະທັບມ້າງສາຍສຳພັນຂອງພວກເຮົາກັບພຣະເຈົ້າ.

### 4. <u>ສຳນຶກໄດ້ວ່າພຣະເຈົ້າອວຍພອນຜູ້ເຊື່ອຟັງ</u> (ພຣະບັນຍັດສອງ 4:39-40)

ໂມເຊໄດ້ບອກພວກອິສຣາເອນໃຫ້ສຳນຶກແລະຈຳໄວ້ສເມີວ່າພຣະເຈົ້າອົງດຽວເທົ່ານັ້ນ, ຄືອົງພຣະຜູ້ເປັນເຈົ້າໃນທົ່ວຈັກ

ກະວານ-**ໃນສວັນເບື້ອງເທິງແລະແຜ່ນດິນໂລກເບື້ອງລຸ່ມ**. ໂດຍການຮັບຮູ້, ການສືບຕໍ່ຈົດຈຳ, ແລະໂດຍການຍອມຮັບເອົາ**ຄຳບັນຊາແລະພຣະບັນຍັດທັງຫມົດ**ຂອງພຣະອົງເທົ່ານັ້ນ, ພວກອິສຣາເອນຈຶ່ງຈະ**ຢູ່**ຢ່າງປອດພັຍແລະ**ຖືກຕ້ອງ**ໃນ**ດິນແດນ**ໃຫມ່ຂອງພວກເຂົາ. ໂດຍການເຊື່ອຟັງຄວາມຂອງພຣະຜູ້ເປັນເຈົ້າຢ່າງພາກພຽນ, ພວກອິສຣາເອນຈຶ່ງຈະມີປະສົບການຕໍ່ຄຳສັນຍາອັນປະເສີດຂອງພຣະອົງຢ່າງຄົບຖ້ວນ. ຫນ້າທີ່ຮັບຜິດຊອບໃນການສອນຄົນລຸ້ນໃຫມ່ໃຫ້ເຊື່ອຟັງແມ່ນໄດ້ກ່າວໃນຕຳຕັກເຕືອນເມື່ອກ່ອນ(ພຣະບັນຍັດສອງ 4:25-31). ຫລັງຈາກນັ້ນມາຫລາຍປີ, ຄຳທຳນວາຍຂອງໂມເຊກໍໄດ້ກາຍເປັນຈິງ.

ຄົນທີ່ຈະຮັບໃຊ້ຜູ້ໃດກໍຕາມຫລືອັນໃດກໍຕາມຕ້ອງມີຄ່າຫລາຍສຳລັບພວກເຂົາ(ມັດທາຍ 6:24). ຖ້າວ່າພວກເຮົາຖືກບັງຄັບໃຫ້ເຂົ້າມີສ່ວນໃນສາຍສຳພັນກັບພຣະເຈົ້າ, ມັນກໍຈະຍາກສຳລັບພວກເຮົາທີ່ຈະເຊື່ອຟັງຕໍ່ຫລັກການແລະຄຳບັນຊາແຫ່ງພຣະຄຳຂອງພຣະອົງ. ຖ້າຫາກສາຍສຳພັນຂອງພວກເຮົາກັບພຣະເຈົ້າຫາກແຫນ້ນແຟ້ນດີແລ້ວ, ພວກເຮົາບໍ່ສາມາດຫວັງໃຫ້ພຣະເຈົ້າເມີນເສີຍຕໍ່ຄວາມເຊື່ອຟັງແລະອວຍພອນພວກເຮົາໄດ້. ມີແຕ່ການເຊື່ອຟັງພຣະບັນຊາຂອງພຣະເຈົ້າເທົ່ານັ້ນ ທີ່ສາມາດເຮັດໃຫ້ພວກທີ່ເຊື່ອເຂົ້າໃນຄວາມຊື່ນຊົມຍິນດີຢ່າງເຕັມສ່ວນຕໍ່ພຣະພອນຝ່າຍຈິດວິນຍານທີ່ພຣະອົງປະສົງຈະປະທານໃຫ້ພວກເຮົາໃນປະຈຸບັນແລະຕໍ່ໆໄປອີກດ້ວຍ, ຊຶ່ງເປັນພຣະພອນທີ່ເຫນືອຄວາມສາມາດທີ່ຈະຄາດຄິດໄດ້(1 ໂກຣິນໂທ 2:9). ໂດຍການຍອມເຊື່ອຟັງຕໍ່ພຣະບັນຊາທັງຫມົດຂອງພຣະເຈົ້າ, ພວກເຮົາຈະສາມາດພັດທະນາຄວາມຮັກໃນການອຸທິດຕົນຕໍ່ພຣະເຈົ້າຢ່າງຖືກຕ້ອງໄດ້.

## <u>ບົດຮຽນຊີວິດ</u>

ໃນສມັຍປະຈຸບັນນີ້ມັນນຳການທົດລອງທີ່ມີອຳນາດຂອງການຕັ້ງກົດສ່ວນຕົວສຳລັບຊີວິດ ແລະເຫັນຊອບວ່າມັນຖືກຕ້ອງຕໍ່ຄວາມຕ້ອງການຂອງພວກເຮົາເອງ. ຄຣິສຕຽນຕ້ອງຕໍ່ສູ້ກັບການທົດລອງຢ່າງນີ້ແລະເອົາພຣະຄຳຂອງພຣະເຈົ້າໃຫ້ເປັນມາດຕະຖານ. ຄຣິສຕຽນຕ້ອງຢືນສູ້ເພື່ອຄວາມສັດຈິງຂອງພຣະເຈົ້າ. ການເຊື່ອຟັງຢ່າງພາກພຽນບໍ່ພຽງແຕ່ຈະນຳພຣະພອນມາສູ່ເຮົາແຕ່ພຽງເທົ່ານັ້ນ, ແຕ່ວ່າຍັງສາມາດໃຫ້ເຮົາຮັກສາທະນຸຖນອມສາຍສຳພັນກັບພຣະອົງອີກດ້ວຍ.

ຖ້າທ່ານຫາກເປີດໂທຣະທັດເທື່ອຫນ້າ, ຫລື ໄປເບິ່ງຫນັງ, ຫລືອ່ານປື້ມທີ່ມີຊື່ສຽງ, ໃຫ້ຕຶກຕອງຢ່າງຖີ່ຖ້ວນກ່ຽວກັບສິ່ງທີ່ເຂົາສເນີຕໍ່ທ່ານນັ້ນ, ວ່າມັນຄຽງຄູ່ໄປກັບມາດຄະຖານຂອງພຣະເຈົ້າຫລືບໍ່? ພຣະຄຳຂອງພຣະເຈົ້າວ່າຢ່າງໃດກ່ຽວກັບສິ່ງທີ່ທ່ານເບິ່ງຫລືອ່ານນັ້ນ?